ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ເລກທີ 1903 /ຫກ.ຄກຊ

ນະຄອນຫຼວງວຽງຈັນ, ວັນທີ .03.. ຕຸລາ 2025

## ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ຂໍເຊີນບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນວຸດທິເໝາະສົມ ເຂົ້າຮ່ວມຍື່ນຊອງປະມູນ ສໍາລັບການສະໜອງວັດຖຸອຸປະກອນລະບົບສູນປະຕິບັດການຄວາມປອດໄພໄຊເບີ (Cyber Security Operation Center) ນໍາໃຊ້ງົບປະມານຂອງກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ປີ 2025, ເຊິ່ງກໍານົດມອບ-ຮັບສິນຄ້າ ພາຍໃນ 35 ວັນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງອຸປະກອນລະບົບສູນປະຕິບັດການຄວາມປອດໄພທາງໄຊເບີ;
4. ບໍລິສັດທີ່ສົນໃຈຊື້ເອກະສານປະມູນຄົບຊຸດເປັນພາສາລາວ ສາມາດຕິດຕໍ່ພົວພັນໄດ້ທີ່ ກົມຄວາມປອດໄພໄຊເບີ (ຕຶກສູນອິນເຕີເນັດ ແຫ່ງຊາດ ຊັ້ນ 6 ໂທລະສັບ: 021 254508) ຕັ້ງຢູ່: ຖະໜົນສາຍລົມ, ບ້ານ: ສາຍລົມ, ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ກົມຄວາມປອດໄພໄຊເບີ ໃນໂມງລັດຖະການ. ໃນລາຄາ 5,000,000 ກີບ/ຊອງ (ຫ້າລ້ານກີບ) ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ, ເລີ່ມຂາຍຊອງປະມູນ ແຕ່ວັນທີ 03 ຕຸລາ 2025;
5. ຊອງປະມູນຕ້ອງສົ່ງ ກ່ອນເວລາ 9:00 ໂມງ ຂອງວັນທີ 06 ພະຈິກ 2025 ທີ່ຫ້ອງປະຊຸມຊັ້ນ 06, ກົມຄວາມປອດໄພໄຊເບີ, ກະຊວງເຕັກ ໂນໂລຊີ ແລະ ການສື່ສານ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າເວລາທີ່ ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນ ວັນທີ 06 ພະຈິກ 2025 ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ.
6. ທຸກຊອງປະມູນຕ້ອງປະກອບການຄໍ້າປະກັນການປະມູນ ດ້ວຍເງິນສົດ ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານ, ແຊັກບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດ/ຫ້າງຮ້ານທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ພອງປະເສີດ ແກ້ວສຸວັນ